ຄວາມເປັນມາ ໂດຍ ສັງເຂບ ຂອງ ພຍັນຊນະ

ຏ ຐ ຑ ຒ ຓ ຘ ຌ ຆ ຎ ຉ

ກ ຂ ຄ ງ

ຈ ສ ຊ ຍ

ດ ຕ ຖ ທ ນ

ບ ປ ຜ ຝ ພ ຟ ມ

ຢ ຣ ລ ວ ຨ ຫ ຬ ອ ຮ

ທັມ-ບາລີ

ທັມ-ລາວ ລາວ-ທັມ

ລາວ-ເດີມ ລາວ-ສໃໝ ລາວ-ວຽງໄຊ

# ຄວາມເປັນມາ ຂອງ ຕົວ ຫນັງສື ລາວ ໂດຍ ສັງເຂບ

ອ້າຍ ສົມບຸນ ໄຊສບັນ ເອົາ ປຶ້ມ ໄວຍາກອນ ລາວ ອັນ ເກົ່າແກ່ ແລະ ສຳເນົາ ໃບລານ ມາ ໃຫ້ ເບິ່ງຈາກວ່າ ມີ ນັກຮຽນຮູ້ ຢາກ ໃຫ້ ເຮົາ ອະທິບາຍ ຕື່ມ ອີກ ພຽງ ເລັກນ້ອຍ ກ່ຽວກັບ ຄວາມເປັນມາ ຂອງ ເຫລົ່າ ພຍັນຊນະ ລາວ ຕ່າງໆ ເພາະວ່າ ພວກ ເພິ່ນ ອ່ານ ແລ້ວ ກໍ ຍັງ ງົງ ຢູ່ ຄື ເກົ່າ ສັນນັ້ນ




(໑) ຕາມ ສີລາຈາລຶກ ທີ່ ເພິ່ນ ເຄີຍ ກວດ ມາ ແລ້ວ ພຍັນຊນະ ທັມ ບໍ່ ມີ ມົນ ຕົວ ແລະ ກໍ ບໍ່ ຮູ້ຈັກ ວ່າ ການຄົ້ນຄວ້າ ຂອງ ເພິ່ນ ໄປ ຮອດ ໃສ ຄູ່ ມື້ ນີ້

ນັກຄົ້ນຄວ້າ ລາວ ຄິດ ວ່າ ເພິ່ນ ແຕ່ງ ພຍັນຊນະ ທັມ-ບາລີ ຂຶ້ນ ໃຫມ່ ສລຸບ ແລ້ວ ພຍັນຊນະ ທັມ-ໄທລາວ ຂອງ ຄົນລາວຊາວໄທ ທັງປວງ ກໍ ຖືກ ດັດແປງ ມາ ຈາກ ທັມ-ບາລີ ທັງນັ້ນ

ຕາມ ຄວາມຊ່າລື ວ່າ ທັມ-ລາວ ມາ ຈາກ ທັມ-ຊຽງໃຫມ່ ແລະ ເພິ່ນ ໃຊ້ ການພິສູດ ແນວໃດ ?

(໕) : ໄທລື້ ກໍ ເຄີຍ ໃຊ້ ພຍັນຊນະ ທັມ ຈຳພວກ ດຽວ ກັບ ກັບ ໄທລາວ ແລະ ໄທຊຽງໃຫມ່ (໖) : ຈີນ ປ່ຽນ ຈຳນວນ ພຍັນຊນະ ໃຫ້ ຫນ້ອຍ ລົງ ເພື່ອ ບໍ່ ໃຫ້ ເຂົາ ນິຍົມ ລາວ ແລະ ຕັດ ຄວາມສັມພັນ ຣະຫວ່າງ ຄົນລາວຊາວໄທ ໂດຍ ທົ່ວໄປ (ຕັດ ຮາກ ຕັດ ບໍ່ ຫົວຊາດນິຍົມ ຖິ້ມ) (໗) : ຈຳນວນ ພຍັນຊນະ ໄທລື້ ທຸກ ມື້ນີ້ ແຮງ ຫນ້ອຍ ລົງ ແລະ ມີ ຮູບ ໃຫມ່

(໘) ເອົາ ຕົວທັມ ມາ ຂຽນ ຄວາມລາວ ທັງ ຮັກສາ ການຂີດຂຽນ ຕາມ ເຄົ້າ ໄວ້ ເຫມືອນ ເດີມ

(໙) ຟື້ນຟູ ຫນັງສື ລາວ ຫລັງຈາກ ລ້ານຊ້າງ ສລາຍ ຕົວ ໄປ ແລ້ວ ປະມານ ມີ ສັຕວັດ ທີ່ ເພິ່ນ ຕື່ມ ຕົວ ສໍ ສັນສະກຣິດ ເຂົ້າ ໖ ຕົວ ເປັນ ໔໑ ຕົວ ແລະ ເພິ່ນ ເຄີຍ ພິມ ປຶ້ມ ດັ່ງກ່າວ ນີ້ ອອກ ໖000 ຫົວ ເມື່ອ ຄສ.໑໙໓໕ ເພື່ອ ການສຶກສາ ໃນ ລາວ ແຕ່ ບໍ່ ເປັນ ຜົນ ສຳເຣັດ ຍ້ອນ ຍັງ ຂຶ້ນ ກັບ ຝຣັ່ງ ຢູ່

(໑໐) ລົດ ຈຳນວນ ພຍັນຊນະ ໃຫ້ ຫນ້ອຍ ລົງ ໂດຍ ລົບ ໂຕ ທີ່ ໃຊ້ ຂຽນ ບາລີ ອອກ ຫມົດ ແຕ່ ຍັງ ໃຊ້ ຕົວເຟື້ອງ ຢູ່

(໑໑) ພວກ ມະຫາ ຕໍ່ສູ້ ກັບ ລູກນ້ອງ ຝຣັ່ງ ບໍ່ ໄຫວ ຈຶ່ງ ຮັບ ເອົາ ຈຳນວນ ໖໗ ຕົວ ມາ ໃຊ້ ເປັນ ທາງ ການ

(໑໒) ຈີນ ປົກຄອງ ໄທລື້ ແລະ ວຽດນາມ ປົກຄອງ ໄທລາວ ນັກລ່າ ຫົວເມືອງ ຂຶ້ນ ທັງ ໒ ນີ້ ໃຊ້ ແຜນ ແບບ ດຽວ ກັນ ຄື ປ່ຽນ ການສະກົດ ທັງ ຊື່ ຖິ່ນຖານ ຕ່າງໆ ຂອງ ເຈົ້າ ຢູ່ ເລື້ອຍໆ ເພື່ອ ຕັດ ຮາກ ຕັດ ເຫງົ້າ ເຈົ້າ ອອກ /ຫນັງສື ລາວ–ວຽງໃຊ ຖືກ ແຕ່ງ ຂຶ້ນ ຢູ່ ຖ້ຳ ແຖບ ເມືອງ ວຽງໃຊ

## 1. ພຍັນຊນະ ທັມ

ເພິ່ນ ຍັງ ຄົ້ນ ພຍັນຊນະ ທັມ ບໍ່ ເຫັນ ທຸກ ຕົວ ເທື່ອ ຕາມ ສິລາຈາລຶກ ແລະ ຕາມ ຜູກ ໃບລານ ຕ່າງໆ ຊຶ່ງ ຂໍ້ສັງເກດ ຂອງ ນັກຄົ້ນຄວ້າ ໄທລາວ ຄາວ ນັ້ນ ກໍ ຜ່ານ ມາ ໄດ້ ເກືອບ ສັຕວັດ ແລ້ວ (ໄທອິສານ ແລະ ໄທລາວ ແຫ່ງ ຊຽງໃຫມ່ ແລະ ແຫ່ງ ເມືອງລາວ) ແລະ ເພື່ອ (ເຮົາ ຜູ້ຂຽນ ທັງ ສອງ ນີ້) ກໍ ຍັງ ບໍ່ ຮູ້ຈັກ ວ່າ ປັດຈຸບັນ ນີ້ ການຄົ້ນຄວ້າ ກ້າວຫນ້າ ໄປ ຮອດ ໃສ ແລ້ວ

## 2. ພຍັນຊນະ ທັມ-ບາລີ

ເມື່ອ ເພິ່ນ ບໍ່ ເຫັນ ຕົວ ທັມ ທຸກ ຕົວ ແລ້ວ ເພິ່ນ ຈຶ່ງ ປົງ ຂໍ້ສັງເກດ ລົງ ວ່າ ຕົວ ທັມ ຂອງ ຄົນລາວຊາວໄທ ໂດຍ ທົ່ວໄປ ແລ້ວ ຖືກ ແຕ່ງ ຂຶ້ນ ຕື່ມ ສະເພາະ ໂຕ ທີ່ ຍັງ ບໍ່ ຄົບ ນັ້ນ ເພື່ອ ໃຫ້ ຂຽນ ຄຳ ບາລີ ໄດ້ ທຸກ ຄຳ

ພຍັນຊນະ ທັມ ພື້ນຖານ ທີ່ ເພິ່ນ ໃຊ້ ຂຽນ ຄຳ ບາລີ ຢ່າງ ດຽວ ມີ ຢູ່ ດ້ວຍກັນ ມີມີ ຕົວ ຄື

| | |
|---|---|
| ❶/ ᨠ ᨡ ᨣ ᨥ ᨦ | ❶/ກະ ຂະ ຄະ ຄຸະ ງະ |
| ❷/ ᨧ ᨨ ᨩ ᨫ ᨬ | ❷/ຈະ ສຸະ ຊະ ຊຸະ ຍຸະ (ສັງເກດ ຕົວຍຸະ ກັບ ຕົວຍະ ຂ້າງລຸ່ມ ໃຫ້ ດີ) |
| ❸/ ᨭ ᨮ ᨯ ᨰ ᨱ | ❸/ຕຸະ ຖຸະ ฑະ ฑຸະ ນຸະ |
| ❹/ ᨲ ᨳ ᨴ ᨵ ᨶ | ❹/ຕະ ຖະ ທະ ທຸະ ນະ |
| ❺/ ᨷ ᨹ ᨻ ᨽ ᨾ | ❺/ປະ ຜະ ພະ ພຸະ ມະ |
| ❻/ ᨿ ᩁ ᩃ ᩅ ᩈ ᩉ ᩊ ᩋ ᩴ | ❻/ຍະ(ຢະ) ຣະ ລະ ວະ ສະ ຫະ ລຸະ ອັງ (ນິກຄະຫິດ) |

## 3. ພຍັນຊນະ ທັມ-ໄທລາວ

ຊຸບ ບູຣົມ ສົ່ງ ລູກ ທັງ ໆ ລົງ ມາ ປົກຄອງ ແດນ ຕ່າງໆ ຕາມ ຫົນ ໃຕ້ ຂອງ ອານາຈັກ ຫນອງແສ ແລະ ຂອງ ຢູ່ບ່ານ ອັນ ເປັນ ແຫລ່ງ ແຫ່ງ ຄວາມຍິ່ງໃຫຍ່ ແລະ ຄວາມຈະເຣີນ ຂອງ ຄົນລາວຊາວໄທ ໂດຍ ທົ່ວໄປ ເມື່ອ ເຮົາ ອີງ ຕາມ ເອກສານ ຕ່າງໆ ແລ້ວ ເຮົາ ເຫັນ ວ່າ ພວກ ຢູ່ ທາງ ຕາເວັນຕົກ ໃຊ້ ຕົວທັມ ບັນທຶກ ພື້ນ ແລະ ຕຳນານ ຕ່າງໆ ແຕ່ ເຮົາ ບໍ່ ຮູ້ຈັກ ດ້ວຍ ຄວາມແນ່ນອນ ວ່າ ພວກ ໃດ ແທ້ ເປັນ ຜູ້ແຕ່ງ ຫລື ຜູ້ໃຊ້ ຕົວທັມ ກ່ອນ ຫມູ່ ຣະຫວ່າງ ໄທ ເມືອງຊວາ (ຊຽງທອງ ຫລວງພຣະບາງ) ໄທຊຽງໃຫມ່ ແລະ ໄທ ອື່ນ ໃນ ແຖບ ຕາເວັນຕົກ ແຖບ ດຽວ ກັນ ຫລື ແຄວ້ນ ດຽວ ກັນ ນີ້ ຈຶ່ງ ຂໍ ໃຫ້ ນັກຮຽນຮູ້ ທັງຫລາຍ ຊ່ວຍ ກັນ ພິສູດ ແລະ ແກ້ໄຂ

## 4. ພຍັນຊນະ ທັມ-ໄທຊຽງໃຫມ່

ເພິ່ນ ວ່າ ຕົວທັມ ຂອງ ໄທລາວ ມາ ຈາກ ຕົວທັມ ຂອງ ໄທຊຽງໃຫມ່ ແຕ່ ຢ່າ ລືມ ວ່າ ເມື່ອ ໕໐ ປີ ກ່ອນ ນັ້ນ ໄທຊຽງໃຫມ່ ບໍ່ ເຄີຍ ວ່າ ເຂົາ ເປັນ ໄທຍ ເຂົາ ວ່າ ເຂົາ ເປັນ ລາວ ຕລອດ ມາ ແມ້ ກະທັ້ງ ວັດວາອາຣາມ ຕ່າງໆ ກໍ ມີ ລວດລາຍ ແບບ ດຽວ ກັນ ກັບ ທາງ ວັດ ໃນ ລາວ ນອກຈາກນັ້ນ ການປາກເວົ້າ ແລະ ນິໄສໃຈຄໍ ຂອງ ໄທຊຽງໃຫມ່ ກໍ ຄ້າຍໆ ຄື ກັບ ກັບ ຂອງ ໄທລາວ ເຖິງຢ່າງໃດ ກໍດີ ຈະ ວ່າ ໄທຊຽງໃຫມ່ ເອົາ ຈາກ ໄທລາວ ຫລື ໄທລາວ ເອົາ ຈາກ ໄທຊຽງໃຫມ່ ກໍ ບໍ່ ມີ ຄວາມສຳຄັນ ຫລື ຈະ ກ່າຍ ຈາກ ພະມ້າ ກໍ ເປັນ ເຊັ່ນ ດຽວ ແຕ່ ຄວາມສຳຄັນ ມີ ຄື ໄທລາວ ມີ ຫນັງສື ເປັນ ຂອງ ເຂົາເອງ ເພື່ອ ໃຊ້ ໃນ ການຂີດຂຽນ ພາສາ ຊາດ ຂອງ ຕົນ ແລະ ກໍ ບໍ່ ແມ່ນ ຄົນ ຊາດ ອື່ນ ແຕ່ງ ໃຫ້ ທັງ ຖືກ ບັງຄັບ ໃຫ້ ໃຊ້ ດັ່ງ ຫນັງສື ແກວ ທີ່ ແມ່ນ ຄຸບພໍ່ ຝຣັ່ງ ແຕ່ງ ຂຶ້ນ ແລ

ໄທ ຊຽງໃຫມ່ ປັບປຸງ ພຍັນຊນະ ທັມ ຕົວ ເດີມ ໃຫ້ ທຽບ ກັບ ຈຳນວນ ພຍັນຊນະ ໄທຍ ສໄມ ໃຫມ່ ນີ້ ທຸກໆ ຕົວ ໄປ ແລ້ວ ແລະ ຮູບ ຂອງ ພຍັນຊນະ ກໍ ຖືກ ດັດແປງ ແຕ່ ເມື່ອ ເຮົາ ຢາກ ອ່ານ ເອກສານ ເຮົາ ຕ້ອງ ຮູ້ຈັກ ອ່ານ ຈຳພວກ ຕົວທັມ ແຄວ້ນ ນີ້ ໃຫ້ ໄດ້ ຮ່ວມ ທັງ ຕົວທັມ ຂອງ ລາວ

## 5. 6. 7. ພຍັນຊນະ ທັມ-ໄທລື້

ຂ້າພະເຈົ້າ ຍັງ ບໍ່ ທັນ ແຕ້ມ ຕົວທັມ ໄທລື້ ໃສ່ ເທື່ອ ມີ ແຕ່ ໂຕ ປັດຈຸບັນ ນີ້ ທີ່ ບໍ່ ງາມ ແລະ ກໍ ບໍ່ ເປັນ ຕາເບິ່ງ ຄາວ ກ່ອນ ໄທລື້ ກໍ ໃຊ້ ຫນັງສື ທັມ ແບບ ດຽວ ກັບ ໄທຊຽງໃຫມ່ ແລະ ໄທລ້ານຊ້າງ ເມື່ອ ຈີນ ປົກຄອງ ໑໒ ພັນນາ ທີ່ ເຄີຍ ເປັນ ສ່ວນ ນຶ່ງ ຂອງ ເມືອງສິງ ເຂົາ ກໍ ປ່ຽນ ຕົວ ຫນັງສື ທັມ ໃຫ້ ໄທລື້ ໂລດ ຫມາຍຄວາມວ່າ ຕົວທັມ ໄທລື້ ຖືກ ປ່ຽນ ຫລາຍ ຄັ້ງ ແລ້ວ (ມີ ຄັ້ງ) ແລະ ບໍ່ ຕ່າງ ຫຍັງ ກັບ ຫນັງສື ລາວ ທີ່ ຂາດ ຫລັກ ແທ້ ແລ

ພວກ ຫນຸ່ມນ້ອຍ ໄທລື້ ກໍ ຂາດ ຄວາມສົນໃຈ ໃນ ວັທນະທັມ ຂອງ ຕົນ ໄປ ເລື້ອຍໆ ຈົນ ເຮັດ ໃຫ້ ເຂົາ ຫັນ ໄປ ໃສ່ ວັທນະທັມ ຂອງ ຈີນ ທັງນັ້ນ ຄັນ ມັນ ຍັງ ເຫລືອ ຢູ່ ກໍ ເຮັດ ເພື່ອ ດຶງດູດ ເພື່ອ ອ້າງ ນັກທ່ອງທ່ຽວ ຢ່າງ ດຽວ

## 8. ພຍັນຊນະ ທັມ–ໄທລ້ານຊ້າງ ຫລື ທັມ–ລາວ

ຫມາຍເຖິງ ຈຳພວກ ພຍັນຊນະ ທີ່ ເປັນ ຮູບ ໂຕທັມ ແຕ່ ໃຊ້ ຂຽນ ຄວາມລາວ ທີ່ ເພິ່ນ ແຕ້ມ ຕົວ ເຫລົ່ານີ້ ຕື່ມ ຄື ບະ ຝະ ຟະ ຢະ ອະ ຮະ ທັງ ລືບ ນິກຄະຫິດ ອັງ ອອກ (ແຕ້ມ ແປ ວ່າ ຂຽນ ກໍ ໄດ້) ດ້ວຍເຫດນີ້ ຕົວທັມ ພື້ນຖານ ທີ່ ເພິ່ນ ໃຊ້ ຂຽນ ຄຳ ລາວ ຕ່າງໆ ຈຶ່ງ ມີ ຢູ່ ດ້ວຍກັບ ນິຫ ຕົວ ອັນ ໄດ້ ແກ່

| | | |
|---|---|---|
| ❶/ | ᨠ ᨡ ᨣ ᨥ ᨦ | ❶/ກະ ຂະ ຄະ ຄະ ງະ |
| ❷/ | ᨧ ᨨ ᨩ ᨫ ᨬ | ❷/ຈະ ສະ ຊະ ຊະ ຍະ (ສັງເກດ ຕົວຍະ ກັບ ຕົວຍະ ໃຫ້ ດີ) |
| ❸/ | ᨭ ᨮ ᨯ ᨰ ᨱ | ❸/ຕະ ຖະ ທະ ທະ ນະ |
| ❹/ | ᨲ ᨳ ᨴ ᨵ ᨶ | ❹/ຕະ ຖະ ທະ ທະ ນະ |
| ❺/ | ᨷ ᨸ ᨹ ᨺ ᨻ ᨼ ᨽ ᨾ | ❺/ບະ ປະ ຜະ ຝະ ພະ ຟະ ພະ ມະ |
| ❻/ | ᨿ ᩀ ᩁ ᩃ ᩅ ᩆ ᩉ ᩊ ᩋ ᩌ | ❻/ຍະ ຢະ ຣະ ລະ ວະ ສະ ຫະ ລະ ອະ ຮະ |

### ຫມາຍເຫດ :

ນ້ຳສຽງ/Ton/Tone (ສຳນຽງ ?) ຂອງ ພຍັນຊນະ ທັງຫມົດ ມີ ພຽງ ໒ ນ້ຳ ຄື ສຽງ ທອງ ຫລື ສຽງ ຂຶ້ນ ແລະ ສຽງ ລົງ ຊຶ່ງ ແຕກຕ່າງ ກັບ ນ້ຳສຽງ ຂອງ ພຍັນຊນະ ລາວ ຄາວ ນີ້ ທີ່ ມີ ຢູ່ ດ້ວຍກັບ ມີ ນ້ຳ ເນື່ອງຈາກວ່າ ເຮົາ ບໍ່ ໄດ້ ອ່ານ ເປັນ ກະ ຂະ ຄະ ທີ່ ມີ ສຽງ ສັ້ນ ອີກ ແລ້ວ ແຕ່ ເຮົາ ຫັນ ມາ ອ່ານ ກໍ ຂໍ ຄໍ ເປັນ ສຽງ ຍາວ ສິ່ງ ທີ່ ເຮົາ ຢາກ ເວົ້າ ໃຫ້ ທ່ານ ເຂົ້າໃຈ ນັ້ນ ກໍ ຄື ການອ່ານ ຄຳ ທີ່ ຂຽນ ດ້ວຍ ພຍັນຊນະ ຈູງ ແລະ ຕົວສະກົດ ພິເສດ ເພາະວ່າ ພຍາງ ຫລັງ ຈະ ເອົາ ນ້ຳສຽງ ຂອງ ພຍາງ ຫນ້າ ສເມີ ເຊັ່ນ ສລາຍ(ສະ~ຫລະ/ຫລາຍ) ຕລາດ(ຕະ~ຫລະ/ຫລາດ) "ຕະ ບໍ່ ແມ່ນ ຕໍ" (ນ້ຳສຽງ ຕ່າງ ກັນ) ສັກຣາດ(ກະ~ຫຣະ/ຫຣາດ) ສລະ(ສະ~ຫລະ) ສຣະ(ສະ~ຫຣະ) ເປັນຕົ້ນ ສະນັ້ນ ເພື່ອ ບໍ່ ໃຫ້ ພຍາງ ຫລັງ ຢືມ ນ້ຳສຽງ ຂອງ ພຍາງ ຫນ້າ ເພິ່ນ ຈຶ່ງ ກົດ ສຣະອະ ໃສ່ ພຍາງ ຫນ້າ ເຊັ່ນ ຕະລາດ ຄັນບໍ່ ມັນ ຊິ ເປັນ ຕະຫລາດ (ຕລາດ) ຂໍ້ມູນ ດັ່ງກ່າວ ນີ້ ໃຊ້ ເປັນ ເຫດຜົນ ທາງ ດ້ານ ວິທຍາການ ໄດ້

ເມື່ອ ເຮົາ ອ້າງ ເຫດຜົນ ໄປ ໃນ ທຳນອງ ນີ້ ແລ້ວ ເປັນຫຍັງ ເຮົາ ຈຶ່ງ ຂຽນ ຄຳ ທີ່ ມາ ຈາກ ພາສາ ບາລີ ເປັນ ຄນະ ແທນທີ່ ຈະ ຂຽນ ເປັນ ຄະນະ ? ຄັນ ຢາກ ໃຫ້ ສອດຄ່ອງ ກັບ ການອ້າງ ເຫດຜົນ ຂ້າງເທິງ ນີ້ ແລ້ວ ເຮົາ ຄວນ ຂຽນ ຄະນະ ຄັນ ເຮົາ ຂຽນ ຄນະ ກໍ ເນື່ອງຈາກວ່າ ເຮົາ ນຳ ແບບ ການສະກົດ ທີ່ ຂຽນ ດ້ວຍ ຕົວທັມ ທີ່ ເຮົາ ອ່ານ ພຍັນຊນະ ແຕ່ ລະ ຕົວ ເຫມືອນ ມີ ສຣະອະ ປະກອບ ຢູ່ ນຳ ແຕ່ ບໍ່ ມີ ສຣະອະ ກົດ ໃສ່ ຢ່າງ ແທ້ຈິງ ແລະ ເພິ່ນ ກໍ ວາງ ກົດເກນ ໄວ້ ວ່າ ໃຫ້ ຂຽນ ສຣະອະ ໃສ່ ພຍັນຊນະ ຕົວ ທ້າຍ ຢ່າງ ດຽວ

ເຖິງຢ່າງໃດ ກໍດີ ກ່ຽວກັບ ເຣື່ອງ Logique ນີ້ ເຮົາ ຕ້ອງ ເກັບ ເອົາ ໂຕ ເກົ່າ ໂຕ ໃຫມ່ ມາ ສຶກສາ ໃຫມ່ ຫມົດ ເລີຍ ຄັນ ເຮົາ ຢາກ ນຳ ການສັງໂຍກ ຕົວທັມ ແຕ່ ຂຽນ ດ້ວຍ ຮູບ ຕົວລາວ ປັດຈຸບັນ ກໍ ຄົງ ບໍ່ ມີ ບັນຫາ ອັນ ບັນຫາ ແທ້ໆ ນັ້ນ ມີ ຢູ່ ຕອນ ເຮົາ ຂຽນ ຕາມ ໃຈ ແປ ວ່າ ການຂາດ ຫລັກ ໄວຍາກອນ ອັນ ເຂັ້ມງວດ ຢ່າງ ແທ້ຈິງ ນັ້ນເອງ ຈະ ເປັນ ອັກຂຣະວິທີ ຫລື ໄວຍາກອນ ພາກ ອື່ນ ກໍດີ ແລະ ສິ່ງ ສຳຄັນ ກໍຄື ການຂຽນ ປໂຍກ ຕ່າງໆ ໃຫ້ ເຂົ້າ ກັນ

ຫລັກ ຂອງ ການປາກເວົ້າ ພາສາ ລາວ ເພາະ ການຂຽນ ປໂຍກ ທຸກ ມື້ ນີ້ ບໍ່ ຕ່າງ ຫຍັງ ກັບ ແກວ ເວົ້າ ລາວ ແລະ ຂ້າ ເວົ້າ ລາວ (ເຂົາ ເວົ້າ ໄປ ໂລດ ສຸດແລ້ວ ແຕ່ ຈະ ເວົ້າ) ຂາດ ຫລັກ ໄວຍາກອນ ອັນ ເຂັ້ມງວດ ອັນ ເປັນ ການທຳລາຍ ພາສາ ລາວ ໄປ ໃນ ໂຕ (ພາສາ ບອກ ຊາດ)

## 9. ພຍັນຊນະ ລາວ-ທັມ

ຫມາຍເຖິງ ຈຳພວກ ພຍັນຊນະ ທີ່ ຖືກ ແຕ້ມ ເປັນ ຮູບ ໂຕ ໃຫມ່ ຄື ຮູບ ຕົວ ຫນັງສື ລາວ ໃນ ປັດຈຸບັນ ນີ້ ເອງ ແຕ່ ກໍ ຍັງ ຮັກສາ ຈຳນວນ ຂອງ ຕົວທັມ ໄວ້ ຫມົດ ທຸກ ຕົວ ທັງ ຕື່ມ ຕົວສໍ ສັນສະກຣິດ ເພີ່ມ ອີກ ໖ ຕົວ ທັງ ເອົາ ວັນນະຍຸດ ແຖມ ໃສ່ ຕອນ ນີ້ເອງ ຊຶ່ງ ໄທສຍາມ ໃຊ້ ວັນນະຍຸດ ມາ ກ່ອນ ໄທລ້ານຊ້າງ ຢູ່ ແລ້ວ ເພາະວ່າ ແຕ່ກີ້ ການຂີດຂຽນ ຂອງ ໄທລາວ ຍັງ ບໍ່ ມີ ວັນນະຍຸດ ເທື່ອ

- ❶ ກ ຂ ຄ ຆ ງ — ກໍ ຂໍ ຄໍ ຄ຺ໍ ງໍ
- ❷ ຈ ຉ ຊ ຌ ຎ — ຈໍ ສ຺ໍ ຊໍ ຊ຺ໍ ຍ຺ໍ
- ❸ ຏ ຐ ຑ ຒ ຓ — ຕ຺ໍ ຖ຺ໍ ທໍ ທ຺ໍ ນ຺ໍ
- ❹ ດ ຕ ຖ ທ ຘ ນ — ຕໍ ຖໍ ທໍ ທ຺ໍ ນໍ
- ❺ ບ ປ ຜ ຝ ພ ຟ ມ — ປໍ ຜໍ ຝໍ ພໍ ຟໍ ພ຺ໍ ມໍ
- ❻ ຍ ຢ ຣ ລ ວ ຨ ຩ ສ ຫ ຬ ອ ຮ — ຍໍ ຢໍ ຣໍ ລໍ ວໍ ຨໍ ຩໍ ສໍ ຫໍ ລ຺ໍ ອໍ ຮໍ

ເພິ່ນ ເຄີຍ ພິມ ປຶ້ມ ອັກຂຣະວິທີ ດັ່ງກ່າວ ນີ້ ອອກ ແລ້ວ ໒000 ຫົວ ເມື່ອ ຄສ.໑໙໓໕ ແຕ່ ມັນ ໄປ ບໍ່ ທົ່ວ ເຖິງ ກັບ ອີກຢ່າງນຶ່ງ Le Laos ຄາວ ນັ້ນ ຍັງ ເປັນ ຫົວເມືອງ ຂຶ້ນ ຂອງ ຝຣັ່ງ ຢູ່ ແລະ ຝຣັ່ງ ເຄີຍ ຫ້າມ ໄທລາວ ໃຊ້ ອັກຂຣະ ລາວ ແຕ່ ໃຫ້ ໃຊ້ ອັກຂຣະ ລາແຕັງ ທີ່ ຄູບພໍ່ ແຕ່ງ ຂຶ້ນ ເພື່ອ ວ່າ ເຂົາ ຈະ ອ່ານ ຄວາມລັບ ຂອງ ໄທລາວ ອອກ ສລຸບ ແລ້ວ ການໃຊ້ ອັກຂຣະ ເຫລົ່ານີ້ ກໍ ເປັນ ພຽງ ໂຄງການ ເທົ່ານັ້ນ

## 10. ພຍັນຊນະ ລາວ-ເດີມ ຫລື ໄທນ້ອຍ

ພຍັນຊນະ ລາວ-ເດີມ ຫລື ໄທນ້ອຍ ທີ່ ຖືກ ຄັດ ອອກ ມາ ຈາກ ພຍັນຊນະ ທັມ-ລາວ ມີ ໒໗ ຕົວ ເນື່ອງຈາກວ່າ ຕົວ ທີ ໒໙ ນັ້ນ (ຬ) ຄົງ ເປັນ ການຂຽນ ຜິດ ຂອງ ຄົນ ທີ່ ກ່າຍ ຫນັງສື ຜູກ ນັ້ນ ຫລາຍກວ່າ ສິ່ງ ອື່ນໆ ຈຶ່ງ ໃຫ້ ຖື ເປັນ ໒໗ ຕົວ ສ່ວນ ຈຳພວກ ສຣະ ນັ້ນ ມີ ຄວາມແຕກຕ່າງ ກັບ ຈຳພວກ ສຣະ ລາວ-ສໃນ ຫລາຍ ຕົວ ເຕີບ ນອກຈາກນີ້ ເພິ່ນ ໃຊ້ ຕົວເຟື້ອງ ຫລາຍ ເຕີບ ອັນ ຫມາຍຄວາມວ່າ ຕົວເຟື້ອງ ກໍ ຖື ເປັນ ພຍັນຊນະ ເຊັ່ນ ດຽວ ກັນ ແຕ່ວ່າ ຂ້າພະເຈົ້າ ຈະ ກ່າວ ເຖິງ ພຽງແຕ່ ພຍັນຊນະ ລາວ–ເດີມ ພື້ນຖານ ຢ່າງ ດຽວ ອັນ ໄດ້ ແກ່

- ❶ ກ ຂ ຄ ງ /ຈ ຊ ຌ ຍ /ດ ຕ ຖ ທ ນ /ບ ປ ຜ ຝ ພ ຟ ມ /ຢ ຣ ລ ວ ສ ຫ ອ ຮ
- ❶ ກໍ ຂໍ ຄໍ ງໍ / ຈໍ ຊໍ ຊ຺ໍ ຍໍ /ດໍ ຕໍ ຖໍ ທໍ ນໍ /ບໍ ປໍ ຜໍ ຝໍ ພໍ ຟໍ ມໍ /ຢໍ ຣໍ ລໍ ວໍ ສໍ ຫໍ ອໍ ຮໍ

## 11. ພຍັນຊນະ ລາວ-ສໄນ

ພຍັນຊນະ ລາວ–ສໃນ ແຫ່ງ ຣາຊອານາຈັກ ລາວ ມີ ພຽງ ໒໗ ຕົວ ພາຍໃຕ້ ນ້ຳສຽງ ມີ ນ້ຳ/ton ອັນ ໄດ້ ແກ່

- ❶ ກ ຂ ຄ /ງ ຈ ສ /ຊ ຍ ດ /ຕ ຖ ທ /ນ ບ ປ /ຜ ຝ ພ /ຟ ມ ຢ /ຣ ລ ວ /ຫ ອ ຮ
- ❶ ກໍ ຂໍ ຄໍ /ງໍ ຈໍ ສໍ /ຊໍ ຍໍ ດໍ /ຕໍ ຖໍ ທໍ /ນໍ ບໍ ປໍ /ຜໍ ຝໍ ພໍ /ຟໍ ມໍ ຢໍ /ຣໍ ລໍ ວໍ /ຫໍ ອໍ ຮໍ

ອີງ ຕາມ ຄວາມເລົ່າລື ກັນ ມາ ວ່າ ຈຳນວນ ໒໗ ຕົວ ນີ້ ກໍ ເພື່ອ ປັບ ຈຳນວນ ພຍັນຊນະ ລາວ ທັງຫມົດ ໃຫ້ ກົງ ກັບ ຈຳນວນ ລູກ ພິມດີດ ເທົ່ານັ້ນ ເອງ ແຕ່ ເຮົາ ຈະ ໄປ ຊອກຫາ ຫລັກຖານ ການຂຽນ ນັ້ນ ແມ່ນ ບໍ່ ມີ ເລີຍ

## 12. ພຍັນຊນະ ລາວ-ວຽງໄຊ

ສ່ວນ ຈຳພວກ ພຍັນຊນະ ລາວ–ວຽງໄຊ ນັ້ນ ໃຫ້ ທ່ານ ໄປ ຊອກຫາ ຄວາມເຂົ້າໃຈ ເອົາ ເອງ

## 13. ຄຳຝາກຝັງ ກັບ ຄວາມຝາກຝັງ

ບໍ່ ມີ ປະເທດ ໃດ ດອກ ໃນ ໂລກ ນີ້ ທີ່ ຍົກ ຄົນ ຕ່າງ ຊາດ ຂຶ້ນ ເປັນ ໃຫຍ່ ເຫນືອ ກວ່າ ປະຊາຊົນ ຄົນ ໃນ ຊາດ ຂອງ ໂຕເອງ ນອກຈາກວ່າ ປະເທດ ນັ້ນ ກາຍ ເປັນ ເມືອງຂຶ້ນ ແລະ/ຫລື ກາຍ ເປັນ ແຂວງ ນຶ່ງ ຂອງ ປະເທດ ດັ່ງກ່າວ ນັ້ນ ໄປ ແລ້ວ

ຄວາມຫຍຸ້ງຍາກ ກໍ ຍ້ອນ ເຮົາ ຢາກ ເປັນ ໂຕ ຂອງ ເຮົາເອງ ນັ້ນ ແລ ເຮົາ ຈຶ່ງ ທຸ້ມເທ ເຫື່ອແຮງ ເຮັດ ຕໍ່ ໄປ ເພື່ອ ເອົາ ໄວ້ ເປັນ ມູນ ໃຫ້ ແກ່ ລູກລາວ ຫລານລາວ ທຸກ ຖ້ວນ ຫນ້າ ແລະ ເພື່ອ ໃຫ້ ເຂົາ ມີ ອະນາຄົດ ພາຍໃຕ້ ກົດຫມາຍ ອັນ ຖືກຕ້ອງ ໃນ ຊາດ ຂອງ ເຂົາເອງ ຄັນ ເຮົາ ບໍ່ ຄິດ ແບບນີ້ ແລ້ວ ເຮົາ ຂໍ ເປັນ ຣັດ ນຶ່ງ ຂອງ ອະເມຣິກາ ຊິ ບໍ່ ດີ ກວ່າ ບໍ (ເປັນ ຫມາ ເສດຖີ ດີ ກວ່າ ເປັນ ຫມາ ວັດ ຂີ້ທຸກ ຕວາ ຄັນ ຢາກ ເປັນ ຫມາ ແທ້ ໆ ກະດາຍ)

ຫລັກ ໄວຍາກອນ ທີ່ ຄົນລາວ ຖົກຖຽງ ກັນ ຢູ່ ຄູ່ ມື້ ນີ້ ຜ້ຽນ ມາ ຈາກ ຫລັກ ໄວຍາກອນ ບາລີ ສ່ວນ ຫລັກ ການແຜງ ການສັງໂຍກ ຕ່າງໆ ນັ້ນ ມາ ຈາກ ຫລັກ ໄວຍາກອນ ທີ່ ໄທລ້ານຊ້າງ ເຄີຍ ໃຊ້ ພາຍໃຕ້ ຣັຊການ ຂອງ ພຣະເຈົ້າ ຈັກພັດ ສຸຣິຍະວົງສາ ທັມມິກະຣາດ ມາ ແລ້ວ ບໍ່ ແມ່ນ ວ່າ ມີ ຄົນ ສໄມ ນີ້ ແຕ່ງ ຂຶ້ນ ສະນັ້ນ ໄທລ້ານຊ້າງ ທັງມວນ ຄວນ ມີ ຄວາມພາກພູມໃຈ ກັບ ມໍຣະດົກ ອັນ ລ້ຳ ຄ່າ ອັນ ນີ້ ຂອງ ເຂົາ ແລະ ຄວນ ປົກປ້ອງ ຮັກສາ ມັນ ໄວ້

ເຖິງຢ່າງໃດ ກໍດີ ການສະກົດ ຄຳ ລາວ ແທ້ ໆ ນັ້ນ (ຄຳມູນ) ທີ່ ໃຊ້ ພຍັນຊນະ ລາວ–ສໄມ ຫລື ທີ່ ໃຊ້ ພຍັນຊນະ ລາວ–ວຽງໄຊ ຂຽນ ຈະ ສ້າງ ບັນຫາ ຫນ້ອຍ ທີ່ສຸດ ໃຫ້ ແກ່ ຄວາມເຂົ້າໃຈ ຮາກຖານ ຂອງ ຄວາມເປັນມາ ຂອງ ສັບ ຕ່າງໆ ແຕ່ຫາກວ່າ ນັກຮຽນ ຈະ ມີ ຄວາມຫຍຸ້ງຍາກ ຫລາຍ ທີ່ສຸດ ສຳລັບ ການຄົ້ນຫາ ຄຳເຄົ້າ ບາລີ ແລະ ຄຳເຄົ້າ ທີ່ ຢືມ ມາ ຈາກ ພາສາ ຕ່າງ ດ້າວ ຄັນ ເຮົາ ສະກົດ ຕາມ ສຽງ (ເຮັດ ໃຫ້ ຄວາມກ້າວຫນ້າ ຊັກ ຊ້າ ຍ້ອນ ເຮົາ ບໍ່ ເຂົ້າໃຈ ໃນ ທັນທີ ທັນໃດ ໂລດ)

ການຂຽນ ປໂຍກ ຕ່າງໆ ໃຫ້ ຖືກຕ້ອງ ກັບ ການປາກເວົ້າ ພາສາ ລາວ ແທ້ ໆ ນັ້ນ ຕ້ອງ ອີງ ໃສ່ ການໃຊ້ ກິຣິຍາ ທັງ ສອງ ຢ່າງ ນີ້ ໃຫ້ ຖືກ ຄື ອະກັມກິຣິຍາ ແລະ ສະກັມກິຣິຍາ ນຶ່ງ ພ້ອມທັງ ການໃຊ້ ລັກສນະນາມ ໃຫ້ ຖືກຕ້ອງ ອີກດ້ວຍ ນຶ່ງ ນອກຈາກນັ້ນ ມັນ ຍັງ ມີ ແນວ ອື່ນ ອີກ ຢູ່ ແຕ່ ສິ່ງ ສຳຄັນ ແລະ ດ່ວນ ທີ່ສຸດ ນັ້ນ ລະ ແມ່ນ ສິ່ງ ທັງ ສອງ ທີ່ ຖືກ ກ່າວ ມາ ແລ້ວ ໃນ ປໂຍກ ຂ້າງເທິງ ນີ້ ເອງ

## 14. ຄຳໂມທະນາ

ເຜືອ ຂໍ ໂມທະນາ ແລະ ຂໍ ຝາກ ບົດຂຽນ ບົດ ນ້ອຍໆ ບົດ ນີ້ ແດ່ ພຣະເດຊານຸເດຊະ ແດ່ ລູກລາວ ຫລານລາວ ທຸກ ຖ້ວນ ຫນ້າ ພ້ອມດ້ວຍ ນັກຮຽນຮູ້ ພາສາ ລາວ ທັງຫລາຍ ແລະ ໃຫ້ ຄິດ ວ່າ ບົດຄວາມ ບົດ ນີ້ ເປັນ ຂອງ ທ່ານ ຄັນ ທ່ານ ຢາກ ສົ່ງ ໃຫ້ ຄົນ ອື່ນ ຫລື ຢາກ ໃຊ້ ຫລື ຢາກ ເອົາ ໄປ ຂຍາຍ ຕໍ່ ຄວາມ ອອກ ເພື່ອ ໃຫ້ ເປັນ ປໂຍດ ແກ່ ສັງຄົມ ລາວ ແລ້ວ ເຜືອ ທັງ ສອງ ກໍ ຂໍ ຍໍ ມື ນົບ ໃສ່ ເກົ້າ ທັງ ຂໍ ເວົ້າ ພ້ອມ ກັນ ວ່າ ສາທຸ ສາທຸ ສາທຸ

ເມື່ອ ວັນຈັນ ທີ ໒໗/໐໑/໒໐໑໕ ມະກະຣາ/ມັງກອນ ພສ.໒໕໕໘ ແຫ່ງ ເມືອງ ປາຣີສ ທີ່ ປະເທດ ຝຣັ່ງ


ໂດຍ ສົມບຸນ ໄຊສນັ່ນ
Par Somboun Saisananh
http://laocom.free.fr
http://laophaen.free.fr

ໂດຍ ຄຳແພວ ພູເພັຊຣລິນທອງ
Par Khamphéo Phouphetlinthong
http://laocom.free.fr
http://laophaen.free.fr




© 2013-2014 Phouphetlinthong. ຄຳແພວ ພູເພັຊຣລິນທອງ




© 2013-2014 Phouphetlinthong. ຄຳແພວ ພູເພັຊຣລິນທອງ

| | | | | | | |
|---|---|---|---|---|---|---|
| 1- Zone Spéciale | Saišombun | 07- Luangnàmtha | (Louangnamtha) | 13- Khammuán | (Khammouane) |
| 2- Préfecture de | Vientiane | 08- P̌hòngšali | (Phongsaly) | 14- Šavannakhet | |
| 2+3- Province de | Vientiane | 09- Luangphrabang | (Louang-Phrabang) | 15- Šaravan | (Saravane) |
| 4- Saiñaburi | (Xaignaboury) | 10- Ȟuaphan | (Houaphan) | 16- Sekong | (Xékong) |
| 5- Udomsai | (Oudomxai) | 11- Sieng k̆huang | (Xiengkhouang) | 17- Attapue | |
| 6- Bókèo | | 12- Borikhamsai | (Borikhan) | 18- Champassak | |